**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

------===000===------


ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6


ເລກທີ: 0 1 0 6 / 2 2 -/ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 0 8 APR 2022

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ເລື່ອງ:** ການຈ່າຍເງິນປັນຜົນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມ ໜັງສືສະເໜີຮຽກໃຫ້ເປີດເຜີຍຂໍ້ມູນເພີ່ມເຕີມກ່ຽວກັບການຈ່າຍເງິນປັນຜົນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ, ສະບັບເລກທີ 383/ຕລຊລ, ລົງວັນທີ 06 ເມສາ 2022

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງເພີ່ມເຕີມມາຍັງທ່ານຊາບ ກ່ຽວກັບການຈ່າຍເງິນປັນຜົນຂອງບໍລິສັດຕາມມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ 2/2022. ເນື່ອງຈາກ ວ່າ ບໍລິສັດ ແມ່ນຢູ່ໃນຂັ້ນຕອນການດຳເນີນການປ່ຽນແປງມູນຄ່າກຳນົດຂອງຮຸ້ນບໍລິສັດກັບພາກສ່ວນທີ່ ກ່ຽວຂ້ອງ. ສະນັ້ນ, ຕໍ່ກັບການຈ່າຍເງິນປັນຜົນດັ່ງກ່າວ ແມ່ນຈະປະຕິບັດດັ່ງນີ້:

**ເງື່ອນໄຂທີ 1** ກໍລະນີຍັງບໍ່ມີການປ່ຽນແປງມູນຄ່າກຳນົດ ແມ່ນຈະຈ່າຍປັນຜົນໃນອັດຕາ 57 ກີບຕໍ່ຮຸ້ນ (ມູນຄ່າ ກຳນົດ 1.000 ກີບຕໍ່ຮຸ້ນ), ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 2.280.000.000 ກີບ,

**ເງື່ອນໄຂທີ 2** ກໍລະນີການປ່ຽນແປງມູນຄ່າກຳນົດ ຈາກ 1.000 ກີບ ມາເປັນ 100 ກີບ ສຳເລັດ ແມ່ນຈະຈ່າຍ ປັນຜົນໃນອັດຕາ 5,7 ກີບຕໍ່ຮຸ້ນ (ມູນຄ່າກຳນົດ 100 ກີບຕໍ່ຮຸ້ນ) ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 2.280.000.000 ກີບ

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ເລຂານຸການບໍລິສັດ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ພົງສີລີ ທອງແຖມ ນະ ອະຍຸດທະຍາ)